ດຽວນີ້ຮູ້ຊາບຊຶ້ງ ເຖິງຄຸນຄ່າຄຳກອນ
ຕອນສັ່ງລາໄລໜີ ຊິບໍ່ໂງຄືນບ້ານ
ໃຈທີ່ບານບໍ່ເຄີຍເສົ້າ ສັງມາເຫງົາບໍ່ມີຊື່ນ
ທຸກວັນຄືນໄດ້ແຕ່ໄຫ້ ທີ່ໄລຮ້າງຫ່າງປາກກາ

ອິນທວານັ້ນແມ່ນອ້າຍ ນາມກະຕ່າຍໝາຍຈັບ
ນັກປະພັນທີ່ມາແຮງ ຈາກແຫຼ່ງຫຼັກເຈັດເຄົ້າ
ດອນນາງທົນຄວາມເສົ້າ ຫຼາຍວັນກໍຫາຍສ່ວາງ
ຄວາມຄິດຜິດ ເຮັດໃຫ້ງຶງແລ້ວງ້ວງ ຄະນຶງໜ້າແລ້ວຫ່ວງຫຼັງ ອ້າຍເອີຍ

ນັ່ງໃຈລອຍແລ້ວກໍເກົ້ ລະເມີຫງ່ວມພວມເຫງົາ
ກຸຫຼາບຂາວພັດໂຫມາ ໄດ້ກ່າວຈາລົມເອື້ອຍ
ເມື່ອຍໃນໃຈທີ່ມາຮູ້ ບຸນຊູນາງນ້ອງຊິຈາກ
ມາຝາກກອນກາບແກ້ວ ຝັງໃຈແລ້ວຊິຍ່າງໜີ ຊັ້ນບໍ

ຕອນນີ້ເອື້ອຍໄດ້ກ້າວ ເຂົ້າມາສູ່ວົງການ
ຢາກສ້າງສັນກັບຊາວຄຣູ ຄູ່ຄຽງກອນນ້ອງ
ຄອງຖ້າແສງຈັນແຈ້ງ ດວງດຽວບໍ່ມີຊື່ນ
ຄັນວ່າດາວຢູ່ລ້ອມ ຫຼາຍຊັ້ນກໍຈິ່ງເຮືອງ ນ້ອງເອີຍ

ສ່ວນວ່າທາງຝ່າງເບື້ອງ ເຂດຖິ່ນການາດາ
ກໍວາຈາຖາມເຖິງ ຮ່ຳຄະນຶງນຳນ້ອງ
ວັນພິລາອ້າຍຂັດຂ້ອງ ໝອງໃຈຫຼາຍຢ້ານເສັຍຊື່
ນາມກ້ອງລື ລັ່ນຟ້າ ຊິລາຮ້າງຫ່າງປາກກາ

ໂລກລືຊາຮັບຮູ້ ສາວຄູເດັ່ນໃນການຂຽນ
ຄວາມສຳຄັນຂອງໂຮງຮຽນ ຊື່ສຽງຮັກສາໄວ້
ໜູ ນິຣາວັນ ທ່ານນັ້ນເປັນຄົນໃຫ້ ກຳລັງໃຈຕ້ອງສືບຕໍ່
ຂໍເປັນຜູ້ຢູ່ຂ້າງ ໃຫ້ນາງນ້ອງຕໍ່ກອນ ວ່າຊັ້ນ

ສີພັນດອນກໍຮັກໝັ້ນ ຝັນໄຝ່ແຕ່ການຂຽນ
ເພື່ອນນັກຮຽນຄື ໜູ ເພິ່ນຊ່ວຍຊູຫຼາຍດ້ານ
ຜົນງານນາງເຄີຍສ້າງ ກໍຕາມທາງຫຍວໄຕ່
ຮວມຈິດໃຈຕໍ່ຕັ້ງ ພະລັງເຂົ້າຮ່ວມກັນ ທ່ານເອີຍ

ຂັນເງິນເອື້ອຍຢູ່ຂ້າງ ບໍ່ວາງປ່ອຍປະລະ
ບັນຫາໃດທີ່ດອນງົງ ບໍ່ອາດປົງລົງໄດ້
ເອື້ອຍກໍເປັນຄົນໃຫ້ ກຳລັງໃຈຄຽງຄູ່
ສ່ວນອ້າຍໄວກໍເປັນຄູ ຜູ້ສອນຄອມພິວເຕີ້ ລະເນີ້ງວ້ງວ່າຊິລາ ແມ່ນບໍ?

ຖ້າທຸກຄົນຮັບໄດ້ ນັກຂຽນໃໝ່ ສີພັນດອນ
ແຕ່ງກອນແທນສາວຫຼັກເຈັດ ເມັດນ້ຳຕານເມືອງໃຕ້
ສິ່ງໃດດີທີ່ນາງສ້າງ ວາງປາກກາແລ້ວປະປ່ອຍ
ຜູ້ນ້ອຍຂໍຮັບໄວ້ ອະພັຍໃຫ້ແກ່ນາງ ແດ່ທ້ອນ

ຕັດສິນໃຈຊິສືບສ້າງ ແປງທາງໃໝ່ໄປຫຼັກເຈັດ
ເຮັດໃຫ້ສົມຄຳລື ຊື່ນາມປາກກາກ້ອງ
ຕັດຂາດຄວາມໝນອງເສົ້າ ໃຫ້ບາງເບົາເບື່ອນບ່ຽງ
ທຸ່ນທ່ຽງທັງຮອບຮູ້ ຜົລງານສູ້ປະກາດກ້ອງ ປະຊາຍ້ອງຍົກວ່າດີ ແທ້ນາ

*ໂດຍ:    ສີພັນດອນ ດອກບົວກາງວັນ*